# ການຍົກລະດັບວຽກງານຄົ້ນຄວ້າວິທະຍາສາດດ້ວຍ AI

ຫລັກສູດ 5 ວັນ ສໍາລັບພະນັກງານຄູ-ອາຈານ ແລະ ນັກຄົ້ນຄວ້າວິໄຈ ມະຫາວິທະຍາໄລແຫ່ງຊາດ

| | |
|---|---|
| **ຊື່ຫລັກສູດ** | ການຍົກລະດັບວຽກງານຄົ້ນຄວ້າວິທະຍາສາດດ້ວຍ AI |
| **ໄລຍະ** | 5 ວັນ (30 ຊົ່ວໂມງ) ວັນທີ 17-21/08/2026 |
| **ກຸ່ມເປົ້າໝາຍ** | ພະນັກງານຄູ-ອາຈານ ແລະ ນັກຄົ້ນຄວ້າວິໄຈ ມະຫາວິທະຍາໄລແຫ່ງຊາດ |
| **ສະຖານທີ່** | ຫ້ອງຝຶກອົບຮົມ (ຕຶກຕ) ສູນເຕັກໂນໂລຊີຂໍ້ມູນຂ່າວສານ, ມະຫາວິທະຍາໄລແຫ່ງຊາດ |
| **ຈໍານວນຜູ້ເຂົ້າຮ່ວມ** | 40 ທ່ານ |
| **ວິທະຍາກອນ** | 1. ປອ. ຄໍາຫຼ້າ ນິນອາລິນສະຫວັດ (ອາຈານສອນພາກວິຊາ ວິທະຍາສາດຄອມພິວເຕີ ຄະນະວິທະຍາສາດທໍາມະຊາດ)<br>2. ປທ. ນິລັນກຸນ ສິງປະເສີດ (ວິຊາການ ສູນເຕັກໂນໂລຊີຂໍ້ມູນຂ່າວສານ ມຊ)<br>3. ປທ. ແກ້ວພູທ່ອນ ທາທະລີງ (ຫົວໜ້າສູນວາລະສານ) |

## 1. ພາບລວມ (Overview)

ໃນຍຸກປັດຈຸບັນ, ວຽກງານຄົ້ນຄວ້າວິທະຍາສາດຮຽກຮ້ອງໃຫ້ມີການເຂົ້າເຖິງ, ວິເຄາະ ແລະ ຮຽບຮຽງຂໍ້ມູນຈໍານວນມະຫາສານ ເຊິ່ງຕ້ອງໃຊ້ເວລາ ແລະ ຄວາມລະອຽດອ່ອນສູງ. ຫຼັກສູດນີ້ຈຶ່ງຖືກອອກແບບມາເພື່ອຍົກລະດັບທັກສະຂອງຄູ-ອາຈານ ແລະ ນັກຄົ້ນຄວ້າ ໃຫ້ສາມາດນໍາໃຊ້ເຕັກໂນໂລຊີປັນຍາປະດິດ (AI) ເຂົ້າເປັນ "ຜູ້ຊ່ວຍອັດສະລິຍະ" ໃນທຸກຂັ້ນຕອນຂອງການເຮັດບົດຄົ້ນຄວ້າຢ່າງມີລະບົບ ແລະ ມີປະສິດທິພາບ.

ຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ວິທີການຫັນປ່ຽນຂະບວນການເຮັດວຽກແບບດັ້ງເດີມ ໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງກວ່າເກົ່າ ໂດຍຜ່ານການຝຶກປະຕິບັດຕົວຈິງກັບເຄື່ອງມືດິຈິຕອນທີ່ທັນສະໄໝ. ເນື້ອໃນຂອງຫຼັກສູດບໍ່ໄດ້ເນັ້ນໜັກພຽງແຕ່ດ້ານເຕັກນິກ, ແຕ່ໃຫ້ຄວາມສໍາຄັນສູງສຸດຕໍ່ "ຈັນຍາບັນທາງວິຊາການ" (Academic Ethics) ເພື່ອໃຫ້ໝັ້ນໃຈວ່າ ນັກຄົ້ນຄວ້າສາມາດໃຊ້ AI ເປັນເຄື່ອງມືສະໜັບສະໜູນການຄິດວິເຄາະຂອງຕົນເອງ ເພື່ອສ້າງສັນຜົນງານທີ່ມີຄຸນນະພາບ, ຖືກຕ້ອງຕາມຫຼັກການວິທະຍາສາດ ແລະ ປ້ອງກັນການລອກກ່າຍຜົນງານ (Plagiarism) ຢ່າງເດັດຂາດ.

## 2. ຈຸດປະສົງ (Objectives)

- ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດຄົ້ນຫາ ເອກະສານວິຊາການໃນລະດັບສາກົນ ແລະ ມີທັກສະໃນການກວດສອບ, ປະເມີນຄວາມໜ້າເຊື່ອຖືຂອງແຫຼ່ງຂໍ້ມູນໄດ້ຢ່າງຖືກຕ້ອງ (Information Evaluation) ໂດຍຜ່ານລະບົບຄົ້ນຫາອັດສະລິຍະ.
- ເພື່ອໃຫ້ສາມາດວິເຄາະ ແລະ ສະຫຼຸບປະເດັນ ສໍາຄັນຈາກບົດຄວາມວິໄຈ ຫຼື ເອກະສານຄົ້ນຄວ້າໜາໆ ພ້ອມທັງປຽບທຽບເນື້ອຫາຂອງແຕ່ລະແຫຼ່ງຂໍ້ມູນໄດ້ໃນເວລາອັນສັ້ນ ໂດຍໃຊ້ AI ເປັນຜູ້ຊ່ວຍຍ່ອຍຂໍ້ມູນ.
- ເພື່ອພັດທະນາທັກສະການຮ່າງໂຄງຮ່າງ ບົດຄົ້ນຄວ້າ, ການວາງໂຄງສ້າງຂໍ້ສະເໜີໂຄງການ (Research Proposal) ແລະ ການຮຽບຮຽງການທົບທວນເອກະສານທີ່ກ່ຽວຂ້ອງ (Literature Review) ໃຫ້ມີໂຄງສ້າງທີ່ຖືກຕ້ອງຕາມຫຼັກວິຊາການ.

- ເພື່ອໃຫ້ສາມາດຈັດລະບຽບຄັງຂໍ້**ມູນ** ໄຟລ໌ PDF ແລະ ການໃສ່ລະບົບອ້າງອີງ (Citation) ເຂົ້າໃນບົດຂຽນໃນໂປຣແກຣມ Word ໂດຍອັດຕະໂນມັດ ຢ່າງເປັນລະບົບ ແລະ ວ່ອງໄວ ເພື່ອປ້ອງກັນຂໍ້ຜິດພາດ.
- ເພື່ອໃຫ້ສາມາດອອກແບບສື່ພາບ ໂປສເຕີສະຫຼຸບຍໍ້ (Research Poster) ແລະ ສະໄລ້ນຳສະເໜີຜົນງານຄົ້ນຄວ້າວິທະຍາສາດ ໃຫ້ມີຄວາມສວຍງາມ, ໂດດເດັ່ນ ແລະ ເຂົ້າໃຈງ່າຍ ສຳລັບການນຳສະເໜີໃນກອງປະຊຸມວິຊາການ.
- ເພື່ອປູກຝັງຈັນຍາບັນທາງວິຊາການ ແລະ ຄວາມຮັບຜິດຊອບໃນການນຳໃຊ້ AI, ຮັບປະກັນການອ້າງອີງທີ່ຖືກຕ້ອງ ແລະ ປ້ອງກັນການລອກກ່າຍຜົນງານ (Plagiarism) ຢ່າງເດັດຂາດ.

## 3. ເງື່ອນໄຂ ແລະ ການກະກຽມ

### 3.1 ເງື່ອນໄຂຜູ້ເຂົ້າຮ່ວມ

- ເປັນ ພະນັກງານຄູ-ອາຈານ ແລະ ນັກຄົ້ນຄວ້າວິໄຈ ທີ່ກຳລັງດຳເນີນການຄົ້ນຄວ້າ ຫຼື ການຂຽນເອກະສານຄົ້ນຄວ້າວິຊາການ
- ມີ ທັກສະຄອມພິວເຕີພື້ນຖານ (ໃຊ້ Word, Email, Browser ໄດ້)
- ບໍ່ຈຳເປັນ ຕ້ອງ ມີ ປະສົບການ AI ມາກ່ອນ

### 3.2 ການກະກຽມກ່ອນຝຶກ

- ອຸປະກອນ: Laptop / Tablet
- ສາມາດເຊື່ອມຕໍ່ອິນເຕີເນັດ Wifi ໄດ້
- ບັນຊີ Email NUOL: ຖ້າຍັງບໍ່ມີ ຫຼື ລືມລະຫັດເຂົ້າສາມາດຕິດຕໍ່ຜູ້ຮັບຜິດຊອບຈັດຝຶກອົບຮົມໄດ້
- ຂໍ້ມູນ: ກຽມຫົວຂໍ້ ຫຼື ໂຄງການຄົ້ນຄວ້າ ແລະ ໄຟລ໌ເອກະສານຕ່າງໆ ເພື່ອນຳໄປເປັນແບບຝຶກຫັດ ແລະ ໄປໃຊ້ກັບວຽກຂອງຕົນເອງໃນພາຍຫຼັງ

## 4. ຄາດຄະເນ່ຜົນໄດ້ຮັບ

- ຜູ້ເຂົ້າຮ່ວມສາມາດຈັດການ, ຈັດເກັບ ເອກະສານອ້າງອີງ ແລະ ໄຟລ໌ຂໍ້ມູນຕ່າງໆ ໄດ້ຢ່າງເປັນລະບົບ ພ້ອມທັງສາມາດໃສ່ລະບົບອ້າງອີງໃນບົດຂຽນໄດ້ຢ່າງຖືກຕ້ອງຕາມຫຼັກວິຊາການ.
- ສາມາດຍົກລະດັບຄຸນນະພາບຂອງສື່ ແລະ ຮູບແບບການນຳສະເໜີຜົນງານວິຊາການ ໃຫ້ມີຄວາມຊັດເຈນ, ສວຍງາມ ແລະ ມີຄວາມເປັນມືອາຊີບສູງຂຶ້ນ.
- ສ້າງບຸກຄະລາກອນທີ່ຮູ້ນຳໃຊ້ເຕັກໂນໂລຊີ AI ຢ່າງເທົ່າທັນ, ມີຄວາມຮັບຜິດຊອບ ແລະ ປະຕິບັດຕາມຫຼັກຈັນຍາບັນທາງວິຊາການ ເພື່ອປ້ອງກັນການລອກກ່າຍຜົນງານ.
- ຍົກລະດັບທັກສະດິຈິຕອນ (Digital Skills) ຂອງຄູ-ອາຈານ ແລະ ນັກຄົ້ນຄວ້າ ມຊ ໃຫ້ສາມາດນຳໃຊ້ເຄື່ອງມືທີ່ທັນສະໄໝເຂົ້າໃນການສະໜັບສະໜູນ ແລະ ຂັບເຄື່ອນວຽກງານຄົ້ນຄວ້າວິທະຍາສາດໃຫ້ມີຄຸນນະພາບ.

# ວາລະການຝຶກອົບຮົມ

# ການຍົກລະດັບວຽກງານຄົ້ນຄວ້າວິທະຍາສາດດ້ວຍ AI

| ເວລາ | ຫົວຂໍ້ / ກິດຈະກຳ | ຜູ້ຮັບຜິດຊອບ |
|---|---|---|
| | **ມື້ທີ 1** | |
| **08:00-08:30** | ລົງທະບຽນ | ກອງເລຂາ |
| **08:30-09:00** | ສະເໜີຈຸດປະສົງ ແລະ ກ່າວຕ້ອນຮັບ | ຄະນະຮັບຜິດຊອບ ຝຶກອົບຮົມ |
| **09:00-09:20** | ກ່າວເປີດພິທີຢ່າງເປັນທາງການ | ຮອງຜູ້ອຳນວຍການໃຫ່ຍ ມຊ |
| **09:20-9:30** | ຖ່າຍຮູບລວມ | ຜູ້ເຂົ້າຮ່ວມທຸກທ່ານ |
| **09:30-9:45** | ພັກຜ່ອນຮັບປະທານອາຫານວ່າງ | |
| **09:30-10:30** | AI ແມ່ນຫຍັງ? ປະຫວັດ ແລະ ວິວັດທະນາການ, ປະເພດ AI (ML, Deep Learning, GenAI), ພາບລວມ AI ໃນວົງຈອນຄົ້ນຄວ້າ | ປອ. ຄຳຫຼ້າ ນິນອາລົມສະຫວັດ |
| **10:30-12:00** | ການຄົ້ນຫາ Perplexity ທຽບ Google Scholar, ຂຽນ Query ວິຊາການ, ຮູ້ຈັກ Citation | |
| **12:00-13:30** | ພັກຜ່ອນຮັບປະທານອາຫານທ່ຽງ | ຜູ້ເຂົ້າຮ່ວມທຸກທ່ານ |
| **13:30-14:30** | ອະລິຍະທຳໃນການຄົ້ນຄວ້າວິທະຍາສາດ, ຫຼັກການອ້າງອີງງານວິໄຈ | ປທ. ແກ້ວພູທ່ອນ ຫາທະລົງ |
| **14:30-14:45** | ພັກຜ່ອນຮັບປະທານອາຫານວ່າງ | ຜູ້ເຂົ້າຮ່ວມທຸກທ່ານ |
| **14:45-15:45** | Workshop: ຝຶກການຄົ້ນຫາເອກະສານໃນຫົວຂໍ້ຂອງຕົນ ແລະ ການສ້າງ Citation | |
| **15:45-16:00** | ສະຫຼຸບສັງລວມກິດຈະກຳ ມື້ທີ 1 | ປອ. ຄຳຫຼ້າ ນິນອາລົມສະຫວັດ |
| | **ມື້ທີ 2** | |
| **08:30-10:00** | AI ບົນຂໍ້ມູນຕົນເອງ: ຕັ້ງຄ່າ NotebookLM ດ້ວຍຊຸດ PDF ວິຊາການ, ສະຫຼຸບ, ດຶງ Key Findings, ປຽບທຽບ Studies, ໃຊ້ Gemini Thematic Analysis | ປທ. ນິລັນກຸນ ສິງປຣະເສີດ |
| **10:00-10:15** | ພັກຜ່ອນຮັບປະທານອາຫານວ່າງ | ຜູ້ເຂົ້າຮ່ວມທຸກທ່ານ |

| ເວລາ | ຫົວຂໍ້ / ກິດຈະກຳ | ຜູ້ຮັບຜິດຊອບ |
|---|---|---|
| 10:15-12:00 | (ສືບຕໍ່) AI ບົນຂໍ້ມູນຕົນເອງ: ຕັ້ງຄ່າ NotebookLM ດ້ວຍຊຸດ PDF ວິຊາການ, ສະຫຼຸບ, ດຶງ Key Findings, ປຽບທຽບ Studies, ໃຊ້ Gemini Thematic Analysis | ຜູ້ເຂົ້າຮ່ວມທຸກທ່ານ |
| 12:00-13:30 | ພັກຜ່ອນຮັບປະທານອາຫານທ່ຽງ | |
| 13:30-14:30 | ສ້າງ Literature Review Notebook, ຮ່າງ Outline | ປທ. ນິລັນກຸນ ສິງປະເສີດ |
| 14:30-14:45 | ພັກຜ່ອນຮັບປະທານອາຫານວ່າງ | ຜູ້ເຂົ້າຮ່ວມທຸກທ່ານ |
| 14:45-16:00 | ກວດ AI Summary ທຽບຕົ້ນສະບັບ, ຫຼີກລ້ຽງ Over-reliance on AI | ປທ. ນິລັນກຸນ ສິງປະເສີດ |
| **ມື້ທີ 3** | | |
| 08:30-10:00 | Mendeley: ສ້າງ Library, ນຳເຂົ້າ PDF, ຈັດ Metadata, ຮູບແບບ Citation (APA/IEEE), ຈັດໂຄງສ້າງ IMRaD / ຂໍ້ສະເໜີໂຄງການ | ປທ. ນິລັນກຸນ ສິງປະເສີດ |
| 10:00-12:00 | (ສືບຕໍ່) Mendeley: ສ້າງ Library, ນຳເຂົ້າ PDF, ຈັດ Metadata, ຮູບແບບ Citation (APA/IEEE), ຈັດໂຄງສ້າງ IMRaD / ຂໍ້ສະເໜີໂຄງການ | |
| 12:00-13:30 | ພັກຜ່ອນຮັບປະທານອາຫານທ່ຽງ | ຜູ້ເຂົ້າຮ່ວມທຸກທ່ານ |
| 13:30-14:30 | ນຳເຂົ້າ References, ເຊື່ອມ Mendeley ກັບ Word/Google Docs, Cite-while-you-write, ແກ້ Cite Error ທີ່ພົບ | |
| 14:30-14:45 | ພັກຜ່ອນຮັບປະທານອາຫານວ່າງ | |
| 14:45-16:00 | (ສືບຕໍ່) ນຳເຂົ້າ References, ເຊື່ອມ Mendeley ກັບ Word/Google Docs, Cite-while-you-write, ແກ້ Cite Error ທີ່ພົບ | |
| **ມື້ທີ 4** | | |
| 08:30-10:00 | ການນຳໃຊ້ Gemini: ຮ່າງ Abstract ສະບັບງ່າຍ, ຄຳຖາມຄົ້ນຄວ້າ, ຈຸດປະສົງການຄົ້ນຄວ້າ | ປອ. ຄຳຫຼ້າ ນິນອາລິນສະຫວັດ |
| 10:00-10:15 | ພັກຜ່ອນຮັບປະທານອາຫານວ່າງ | ຜູ້ເຂົ້າຮ່ວມທຸກທ່ານ |
| 10:15-12:00 | ແນະນຳ ເຄື່ອງມື Canva ແລະ ລົງທະບຽນນຳໃຊ້ | ປອ. ຄຳຫຼ້າ ນິນອາລິນສະຫວັດ |
| 12:00-13:30 | ພັກຜ່ອນຮັບປະທານອາຫານທ່ຽງ | ຜູ້ເຂົ້າຮ່ວມທຸກທ່ານ |
| 13:30-14:30 | ປ່ຽນຜົນຂໍ້ມູນການຄົ້ນຄວ້າ ເປັນຮູບພາບ, Canva: ໂປສເຕີ Research, Slide presentation, Infographic | ປອ. ຄຳຫຼ້າ ນິນອາລິນສະຫວັດ |
| 14:30-14:45 | ພັກຜ່ອນຮັບປະທານອາຫານວ່າງ | ຜູ້ເຂົ້າຮ່ວມທຸກທ່ານ |

| ເວລາ | ຫົວຂໍ້ / ກິດຈະກຳ | ຜູ້ຮັບຜິດຊອບ |
|---|---|---|
| **14:45-16:00** | (ສືບຕໍ່) Workshop: ສ້າງ Research Poster / Seminar Slide ຈາກວຽກຂອງຕົນ, Design Clarity, Data Viz, ທົດສອບ Peer Review ກ່ຽວກັບສື່ທີ່ສ້າງ | ຜູ້ເຂົ້າຮ່ວມທຸກທ່ານ |
| | **ມື້ທີ 5** | |
| **08:30-09:30** | ທົບທວນ Tools ທຸກຢ່າງ, Q&A session, ແລກປ່ຽນ Best Practice | ວິທະຍາກອນທຸກທ່ານ |
| **09:30-10:00** | ແຕ່ລະທ່ານ ສ້າງ Seminar Slide ຈາກວຽກຄົ້ນຄວ້າຂອງຕົນ 1 ຫົວຂໍ້ | ຜູ້ເຂົ້າຮ່ວມທຸກທ່ານ |
| **10:00-10:15** | ພັກຜ່ອນຮັບປະທານອາຫານວ່າງ | |
| **10:15-12:00** | (ສືບຕໍ່) ສ້າງ Seminar Slide ຈາກວຽກຄົ້ນຄວ້າຂອງຕົນ 1 ຫົວຂໍ້ | |
| **12:00-13:30** | ພັກຜ່ອນຮັບປະທານອາຫານທ່ຽງ | |
| **13:30-14:30** | ແຕ່ລະທ່ານ ນຳສະເໜີ 10 ນາທີ, Feedback ຈາກ ວິທະຍາກອນ + ກຸ່ມ | |
| **14:30-14:45** | ພັກຜ່ອນຮັບປະທານອາຫານວ່າງ | |
| **14:45-15:30** | (ສືບຕໍ່) ແຕ່ລະກຸ່ມນຳສະເໜີ 10 ນາທີ, Feedback ຈາກ ວິທະຍາກອນ + ກຸ່ມ | |
| **15:30-16:30** | ສະຫຼຸບຖອດຖອນບົດຮຽນ, ມອບໃບຢັ້ງຢືນ ແລະ ກ່າວປິດພິທີ | ຮອງຜູ້ອຳນວຍການໃຫ່ຍ ມຊ ແລະ ຄະນະຮັບຜິດຊອບຝຶກອົບຮົມ |